# ສະບາຍດີປີໃໝ່

# Happy New Year

## ປີ ມະໂລງ ພສ ໒໕໖໗ ຄສ 2024

## ປະຕິທິນກົດໝາຍ Legal Calendar













ສະແກນ QR codes ເພື່ອເບິ່ງວິດີໂອທັງໝົດຂອງປະຕິທິນທາງດ້ານກົດໝາຍ ປີ 2024

ພິມສະບັບທີ 15 - ປີທີ 15
ເລກທີອະນຸຍາດພິມ: 065/ວພຈ02112023

# ການມີສ່ວນຮ່ວມຂອງຊຸມຊົນຕໍ່ການຕັດສິນໃຈໃນການໃຫ້ເຊົ່າ ແລະ ສຳປະທານທີ່ດິນຂອງລັດ




## ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ), ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019

### ມາດຕາ 119 ການເຊົ່າ ຫຼື ສຳປະທານທີ່ດິນຂອງລັດ, ວັກ 1

ການເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ຕ້ອງຜ່ານການປະມູນ ແລະ ດຳເນີນໃນເຂດທີ່ດິນຂອງລັດທີ່ລັດໄດ້ຈັດສັນໄວ້. ຜູ້ເຊົ່າ ຫຼື ຜູ້ສຳປະທານ ຕ້ອງດຳເນີນການສຶກສາຜົນກະທົບ ຫຼື ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ລວມທັງສ້າງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ຄຳແນະນຳ ກ່ຽວກັບການພິຈາລະນາອະນຸມັດການລົງທຶນ ແລະ ກົນໄກການຄຸ້ມຄອງທີ່ດິນໃຫ້ເຊົ່າ ຫຼື ສຳປະທານ ສຳລັບການປູກພືດກະສິກຳ ເລກທີ 0457/ກຜທ, ລົງວັນທີ 27 ກຸມພາ 2019

**4. ການມີສ່ວນຮ່ວມຂອງຊຸມຊົນ**

1. ໄດ້ຮັບຂໍ້ມູນເປັນສຳເນົາເອກະສານ ທີ່ກ່ຽວຂ້ອງກັບຕົນ ຈາກເຈົ້າຂອງໂຄງການ ໃນການດຳເນີນງານຂອງບໍລິສັດລົງທຶນ ລວມທັງຜົນໄດ້ຜົນເສຍຢ່າງຄົບຖ້ວນ;
2. ມີການຕັດສິນໃຈ ແລະ ມີຄວາມເອກະພາບຂອງຊຸມຊົນທັງໝົດ ໂດຍອີງໃສ່ສຽງສ່ວນຫຼາຍ ແລະ ບັນທຶກເປັນລາຍລັກອັກສອນ ແລະ ຖືກຕ້ອງທາງດ້ານກົດໝາຍ.

ປີ ເຖາະ ພສ ໒໕໖໖ **ມັງກອນ 1 January** ຄສ 2024

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | 1 ຮ.5 ດ.1 | 2 ຮ.6 ດ.1 | 3 ຮ.7 ດ.1 | 4 ຮ.8 ດ.1 | 5 ຮ.9 ດ.1 | 6 ຮ.10 ດ.1 |
| 7 ຮ.11 ດ.1 | 8 ຮ.12 ດ.1 | 9 ຮ.13 ດ.1 | 10 ຮ.14 ດ.1 | 11 ຂ.1 ດ.2 | 12 ຂ.2 ດ.2 | 13 ຂ.3 ດ.2 |
| 14 ຂ.4 ດ.2 | 15 ຂ.5 ດ.2 | 16 ຂ.6 ດ.2 | 17 ຂ.7 ດ.2 | 18 ຂ.8 ດ.2 | 19 ຂ.9 ດ.2 | 20 ຂ.10 ດ.2 |
| 21 ຂ.11 ດ.2 | 22 ຂ.12 ດ.2 | 23 ຂ.13 ດ.2 | 24 ຂ.14 ດ.2 | 25 ຂ.15 ດ.2 | 26 ຮ.1 ດ.2 | 27 ຮ.2 ດ.2 |
| 28 ຮ.3 ດ.2 | 29 ຮ.4 ດ.2 | 30 ຮ.5 ດ.2 | 31 ຮ.6 ດ.2 | | | |

1 ວັນປີໃໝ່ສາກົນ

20 ວັນສ້າງຕັ້ງກອງທັບປະຊາຊົນລາວ

ປີ ເຖາະ ພສ ໒໕໖໖ **ກຸມພາ 2 February** ຄສ 2024

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | | 1 ຮ.7 ດ.2 | 2 ຮ.8 ດ.2 | 3 ຮ.9 ດ.2 |
| 4 ຮ.10 ດ.2 | 5 ຮ.11 ດ.2 | 6 ຮ.12 ດ.2 | 7 ຮ.13 ດ.2 | 8 ຮ.14 ດ.2 | 9 ຮ.15 ດ.2 | 10 ຂ.1 ດ.3 |
| 11 ຂ.2 ດ.3 | 12 ຂ.3 ດ.3 | 13 ຂ.4 ດ.3 | 14 ຂ.5 ດ.3 | 15 ຂ.6 ດ.3 | 16 ຂ.7 ດ.3 | 17 ຂ.8 ດ.3 |
| 18 ຂ.9 ດ.3 | 19 ຂ.10 ດ.3 | 20 ຂ.11 ດ.3 | 21 ຂ.12 ດ.3 | 22 ຂ.13 ດ.3 | 23 ຂ.14 ດ.3 | 24 ຂ.15 ດ.3 |
| 25 ຮ.1 ດ.3 | 26 ຮ.2 ດ.3 | 27 ຮ.3 ດ.3 | 28 ຮ.4 ດ.3 | 29 ຮ.5 ດ.3 | | |

1 ວັນສ້າງຕັ້ງສະຫະພັນກຳມະບານລາວ

24 ວັນມາຄະບູຊາ - ບຸນນະມັດສະການ ພຣະທາດ ສີໂຄດຕະບອງ
- ບຸນນະມັດສະການ ຜາສາດຫີນ ວັດພູ ຈຳປາສັກ

## ການລົງທຶນແບບມີຄວາມຮັບຜິດຊອບ ໃນການເຄົາລົບສິດຂອງປະຊາຊົນຕໍ່ການນຳໃຊ້ທີ່ດິນ, ການປະມົງ, ປ່າໄມ້ ແລະ ແຫຼ່ງນ້ຳ




### ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ (ສະບັບປັບປຸງ), ເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016

### ມາດຕາ 73 ພັນທະດ້ານສັງຄົມ, ຂໍ້ 3-5

ຜູ້ລົງທຶນ ມີພັນທະດ້ານສັງຄົມດັ່ງນີ້:

3. ເຄົາລົບ, ນັບຖືຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງທ້ອງຖິ່ນ;
4. ທົດແທນຄ່າເສຍຫາຍໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ ຈາກການດຳເນີນທຸລະກິດຂອງຕົນ;
5. ປະກອບສ່ວນຊຸກຍູ້, ສົ່ງເສີມທຸລະກິດພາຍໃນ, ການແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ພັດທະນາທ້ອງຖິ່ນໃນເຂດໂຄງການຂອງຕົນ.

### ຄູ່ມືແນະນຳ ການລົງທຶນດ້ານກະສິກຳ ແລະ ປ່າໄມ້ ແບບມີຄວາມຮັບຜິດຊອບ ຢູ່ ສປປ ລາວ (ກໍລະນີສຶກສານັກລົງທຶນ ສປ ຈີນ) ປີ 2021

**ພາກທີ II ຫຼັກການສຳລັບການລົງທຶນແບບມີຄວາມຮັບຜິດຊອບ ໃນ ລາວ**

**3. ການເຄົາລົບສິດຂອງປະຊາຊົນໃນການນຳໃຊ້ທີ່ດິນ, ການປະມົງ, ປ່າໄມ້ ແລະ ແຫຼ່ງນ້ຳ**

ການລົງທຶນທີ່ມີຄວາມຮັບຜິດຊອບຕ້ອງເຄົາລົບສິດຂອງປະຊາຊົນທ້ອງຖິ່ນໃນການຄອບຄອງນຳໃຊ້ທີ່ດິນ, ການປະມົງ, ການນຳໃຊ້ປ່າໄມ້ ແລະ ແຫຼ່ງນ້ຳທີ່ຊອບທຳລວມທັງສິດຕາມປະເພນີຂອງປະຊາຊົນທ້ອງຖິ່ນ. ນັກລົງທຶນຍັງຕ້ອງຮັບຮູ້ສິດຂອງປະຊາຊົນທ້ອງຖິ່ນໃນການເຫັນດີເຫັນພ້ອມແບບອິດສະຫຼະ ໂດຍໄດ້ຮັບຂໍ້ມູນລ່ວງໜ້າຕໍ່ການລົງທຶນທຸກໆປະເພດ, ໂດຍສະເພາະໃນພື້ນທີ່ດິນ ແລະ ປ່າໄມ້ທີ່ປະຊາຊົນນຳໃຊ້ຕາມປະເພນີ.

ປີ ເຖາະ ພສ ໒໕໖໖ **ມີນາ 3 March** ຄສ 2024

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | | | 1 ຮ.6 ດ.3 | 2 ຮ.7 ດ.3 |
| 3 ຮ.8 ດ.3 | 4 ຮ.9 ດ.3 | 5 ຮ.10 ດ.3 | 6 ຮ.11 ດ.3 | 7 ຮ.12 ດ.3 | 8 ຮ.13 ດ.3 | 9 ຮ.14 ດ.3 |
| 10 ຂ.1 ດ.4 | 11 ຂ.2 ດ.4 | 12 ຂ.3 ດ.4 | 13 ຂ.4 ດ.4 | 14 ຂ.5 ດ.4 | 15 ຂ.6 ດ.4 | 16 ຂ.7 ດ.4 |
| 17 ຂ.8 ດ.4 | 18 ຂ.9 ດ.4 | 19 ຂ.10 ດ.4 | 20 ຂ.11 ດ.4 | 21 ຂ.12 ດ.4 | 22 ຂ.13 ດ.4 | 23 ຂ.14 ດ.4 |
| 24 ຂ.15 ດ.4 | 25 ຮ.1 ດ.4 | 26 ຮ.2 ດ.4 | 27 ຮ.3 ດ.4 | 28 ຮ.4 ດ.4 | 29 ຮ.5 ດ.4 | 30 ຮ.6 ດ.4 |
| 31 ຮ.7 ດ.4 | | | | | | |

8 ວັນແມ່ຍິງສາກົນ

22 ວັນສ້າງຕັ້ງ ພັກປະຊາຊົນປະຕິວັດລາວ

ປີ ເຖາະ ພສ ໒໕໖໖ **ເມສາ 4 April** ຄສ 2024

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | 1 ຮ.8 ດ.4 | 2 ຮ.9 ດ.4 | 3 ຮ.10 ດ.4 | 4 ຮ.11 ດ.4 | 5 ຮ.12 ດ.4 | 6 ຮ.13 ດ.4 |
| 7 ຮ.14 ດ.4 | 8 ຮ.15 ດ.4 | 9 ຂ.1 ດ.5 | 10 ຂ.2 ດ.5 | 11 ຂ.3 ດ.5 | 12 ຂ.4 ດ.5 | 13 ຂ.5 ດ.5 |
| 14 ຂ.6 ດ.5 | 15 ຂ.7 ດ.5 | 16 ຂ.8 ດ.5 | 17 ຂ.9 ດ.5 | 18 ຂ.10 ດ.5 | 19 ຂ.11 ດ.5 | 20 ຂ.12 ດ.5 |
| 21 ຂ.13 ດ.5 | 22 ຂ.14 ດ.5 | 23 ຂ.15 ດ.5 | 24 ຮ.1 ດ.5 | 25 ຮ.2 ດ.5 | 26 ຮ.3 ດ.5 | 27 ຮ.4 ດ.5 |
| 28 ຮ.5 ດ.5 | 29 ຮ.8 ດ.5 | 30 ຮ.7 ດ.5 | | | | |

13 ວັນສັງຂານລ່ວງ

14 ວັນເນົາ / ວັນສ້າງຕັ້ງອົງການຈັດຕັ້ງຊາວໜຸ່ມ ປປລ

15 ວັນເນົາ

16 ວັນສັງຂານຂຶ້ນ




## ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ), ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019

### ມາດຕາ 44 (ໃໝ່) ການນຳໃຊ້ທີ່ດິນປ່າໄມ້, ວັກ 2

ລັດຮັບຮູ້ການນຳໃຊ້ທີ່ດິນຂອງປະຊາຊົນທີ່ໄດ້ອາໄສ ແລະ ທຳການຜະລິດຢູ່ໃນເຂດທີ່ດິນປ່າໄມ້ກ່ອນການກຳນົດເຂດດັ່ງກ່າວເປັນທີ່ດິນປ່າໄມ້ ໂດຍມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງດຳເນີນການສຳຫຼວດ, ເກັບກຳຂໍ້ມູນ ແລະ ດຳເນີນການຈັດສັນຄືນໃໝ່ໃນເຂດທີ່ດິນປ່າໄມ້ ແລ້ວອອກໃບຢັ້ງຢືນການນຳໃຊ້ທີ່ດິນໃຫ້ຕາມກົດໝາຍ ພ້ອມທັງໃຫ້ປະຊາຊົນໃນເຂດດັ່ງກ່າວມີສ່ວນຮ່ວມໃນການປົກປັກຮັກສາປ່າໄມ້ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍປ່າໄມ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ປີ ມະໂລງ ພສ ໒໕໖໗ — ພຶດສະພາ **5** May — ຄສ 2024

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | 1 ຮ.8 ດ.5 | 2 ຮ.9 ດ.5 | 3 ຮ.10 ດ.5 | 4 ຮ.11 ດ.5 |
| 5 ຮ.12 ດ.5 | 6 ຮ.13 ດ.5 | 7 ຮ.14 ດ.5 | 8 ຂ.1 ດ.6 | 9 ຂ.2 ດ.6 | 10 ຂ.3 ດ.6 | 11 ຂ.4 ດ.6 |
| 12 ຂ.5 ດ.6 | 13 ຂ.6 ດ.6 | 14 ຂ.7 ດ.6 | 15 ຂ.8 ດ.6 | 16 ຂ.9 ດ.6 | 17 ຂ.10 ດ.6 | 18 ຂ.11 ດ.6 |
| 19 ຂ.12 ດ.6 | 20 ຂ.13 ດ.6 | 21 ຂ.14 ດ.6 | 22 ຂ.15 ດ.6 | 23 ຮ.1 ດ.6 | 24 ຮ.2 ດ.6 | 25 ຮ.3 ດ.6 |
| 26 ຮ.4 ດ.6 | 27 ຮ.5 ດ.6 | 28 ຮ.6 ດ.6 | 29 ຮ.7 ດ.6 | 30 ຮ.8 ດ.6 | 31 ຮ.9 ດ.6 | |

1 ວັນກຳມະກອນສາກົນ

22 ວັນບຸນວິສາຂະບູຊາ

23 ວັນປຸ່ງນ ພສ 2567

ປີ ມະໂລງ ພສ ໒໕໖໗ — ມິຖຸນາ **6** June — ຄສ 2024

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | | | | 1 ຮ.10 ດ.6 |
| 2 ຮ.11 ດ.6 | 3 ຮ.12 ດ.6 | 4 ຮ.13 ດ.6 | 5 ຮ.14 ດ.6 | 6 ຮ.15 ດ.6 | 7 ຂ.1 ດ.7 | 8 ຂ.2 ດ.7 |
| 9 ຂ.3 ດ.7 | 10 ຂ.4 ດ.7 | 11 ຂ.5 ດ.7 | 12 ຂ.6 ດ.7 | 13 ຂ.7 ດ.7 | 14 ຂ.8 ດ.7 | 15 ຂ.9 ດ.7 |
| 16 ຂ.10 ດ.7 | 17 ຂ.11 ດ.7 | 18 ຂ.12 ດ.7 | 19 ຂ.13 ດ.7 | 20 ຂ.14 ດ.7 | 21 ຂ.15 ດ.7 | 22 ຮ.1 ດ.7 |
| 23 ຮ.2 ດ.7 | 24 ຮ.3 ດ.7 | 25 ຮ.4 ດ.7 | 26 ຮ.5 ດ.7 | 27 ຮ.6 ດ.7 | 28 ຮ.7 ດ.7 | 29 ຮ.8 ດ.7 |
| 30 ຮ.9 ດ.7 | | | | | | |

1 ວັນເດັກນ້ອຍສາກົນ / ວັນປູກຕົ້ນໄມ້ແຫ່ງຊາດ

# ການມີສ່ວນຮ່ວມຂອງຊຸມຊົນໃນການຫຼຸດຜ່ອນມົນລະພິດທາງອາກາດ




## ຂໍ້ຕົກລົງ ວ່າດ້ວຍການຄວບຄຸມມົນລະພິດ, ເລກທີ 1687/ກສຊ, ລົງວັນທີ 7 ເມສາ 2021

### ໝວດທີ 3 ມາດຕະການຄວບຄຸມ ແລະ ແກ້ໄຂມົນລະພິດທາງອາກາດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນກິດຈະການໃດໜຶ່ງ ຕ້ອງປະຕິບັດມາດຕະການຕົ້ນຕໍໃນການຄວບຄຸມມົນລະພິດທາງອາກາດ ທີ່ເກີດຈາກຝຸ່ນລະອອງ, ຄວັນ ຫຼື ທາດອາຍພິດ ທີ່ເຈືອປົນໃນອາກາດ ບໍ່ໃຫ້ເກີນມາດຕະຖານສິ່ງແວດລ້ອມແຫ່ງຊາດ ດັ່ງນີ້:

**ຂ. ມາດຕະການຄວບຄຸມມົນລະພິດທາງອາກາດທີ່ເກີດຈາກຄົວເຮືອນ:**

1. ບໍ່ໃຫ້ຈູດຂີ້ເຫຍື້ອ, ສິ່ງເສດເຫຼືອອັນຕະລາຍ, ເຄມີ, ຈູດປ່າ, ຈູດທົ່ງນາ, ຈູດສວນ ແບບຊະຊາຍເພື່ອຄວບຄຸມ ແລະ ຫຼຸດຜ່ອນມົນລະພິດທາງອາກາດ.

**ຄ. ມາດຕະການຄວບຄຸມມົນລະພິດທາງອາກາດທີ່ອາດເກີດ ຫຼື ເກີດຈາກໄພທຳມະຊາດ:**

ເຂດທີ່ໄດ້ປະກາດເປັນເຂດຄວບຄຸມມົນລະພິດທາງອາກາດທີ່ອາດເກີດ ຫຼື ເກີດຈາກໄພທຳມະຊາດ, ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສົມທົບກັບພະແນກການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງໂດຍປະຕິບັດຕາມຂັ້ນຕອນດັ່ງນີ້:

1. ສຳຫຼວດ, ກຳນົດ ແລະ ສ້າງແຜນທີ່ເຂດຄວບຄຸມຄວາມສ່ຽງ ທີ່ອາດເກີດມົນລະພິດທາງອາກາດຈາກໄພທຳມະຊາດ;
2. ປະເມີນລະດັບຄວາມເປັນອັນຕະລາຍຂອງມົນລະພິດທາງອາກາດທີ່ເກີດຈາກໄພທຳມະຊາດ;
3. ກຳນົດມາດຕະການແກ້ໄຂມົນລະພິດທາງອາກາດທີ່ເກີດຈາກໄພທຳມະຊາດ.

ປີ ມະໂລງ ພສ ໒໕໖໗ **ກໍລະກົດ** **7** **July** ຄສ 2024

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | 1 ຮ.10 ດ.7 | 2 ຮ.11 ດ.7 | 3 ຮ.12 ດ.7 | 4 ຮ.13 ດ.7 | 5 ຮ.14 ດ.7 | 6 ຂ.1 ດ.8 |
| 7 ຂ.2 ດ.8 | 8 ຂ.3 ດ.8 | 9 ຂ.4 ດ.8 | 10 ຂ.5 ດ.8 | 11 ຂ.6 ດ.8 | 12 ຂ.7 ດ.8 | 13 ຂ.8 ດ.8 |
| 14 ຂ.9 ດ.8 | 15 ຂ.10 ດ.8 | 16 ຂ.11 ດ.8 | 17 ຂ.12 ດ.8 | 18 ຂ.13 ດ.8 | 19 ຂ.14 ດ.8 | 20 ຂ.15 ດ.8 |
| 21 ຮ.1 ດ.8 | 22 ຮ.2 ດ.8 | 23 ຮ.3 ດ.8 | 24 ຮ.4 ດ.8 | 25 ຮ.5 ດ.8 | 26 ຮ.6 ດ.8 | 27 ຮ.7 ດ.8 |
| 28 ຮ.8 ດ.8 | 29 ຮ.9 ດ.8 | 30 ຮ.10 ດ.8 | 31 ຮ.11 ດ.8 | | | |

13 ວັນອະນຸລັກ ສັດນໍ້າ-ສັດປ່າ ແຫ່ງຊາດ

20 ວັນສ້າງຕັ້ງສະຫະພັນແມ່ຍິງລາວ
ວັນບຸນເຂົ້າພັນສາ

ປີ ມະໂລງ ພສ ໒໕໖໗ **ສິງຫາ** **8** **August** ຄສ 2024

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | | 1 ຮ.12 ດ.8 | 2 ຮ.13 ດ.8 | 3 ຮ.14 ດ.8 |
| 4 ຮ.15 ດ.8 | 5 ຂ.1 ດ.9 | 6 ຂ.2 ດ.9 | 7 ຂ.3 ດ.9 | 8 ຂ.4 ດ.9 | 9 ຂ.5 ດ.9 | 10 ຂ.6 ດ.9 |
| 11 ຂ.7 ດ.9 | 12 ຂ.8 ດ.9 | 13 ຂ.9 ດ.9 | 14 ຂ.10 ດ.9 | 15 ຂ.11 ດ.9 | 16 ຂ.12 ດ.9 | 17 ຂ.13 ດ.9 |
| 18 ຂ.14 ດ.9 | 19 ຂ.15 ດ.9 | 20 ຮ.1 ດ.9 | 21 ຮ.2 ດ.9 | 22 ຮ.3 ດ.9 | 23 ຮ.4 ດ.9 | 24 ຮ.5 ດ.9 |
| 25 ຮ.6 ດ.9 | 26 ຮ.7 ດ.9 | 27 ຮ.8 ດ.9 | 28 ຮ.9 ດ.9 | 29 ຮ.10 ດ.9 | 30 ຮ.11 ດ.9 | 31 ຮ.12 ດ.9 |

13 ວັນສື່ມວນຊົນແຫ່ງຊາດ

15 ວັນລັດຖະທຳມະນູນແຫ່ງ ສປປ ລາວ

23 ວັນຍຶດອຳນາດ




## ກົດໝາຍວ່າດ້ວຍ ຄວາມສະເໝີພາບຍິງ-ຊາຍ, ເລກທີ 77/ສພຊ, ລົງວັນທີ 28 ພະຈິກ 2019

### ມາດຕາ 18 ຄວາມສະເໝີພາບກ່ຽວກັບສາຍພົວພັນຄອບຄົວ, ວັກ 3

ລູກຍິງ ແລະ ລູກຊາຍ ມີຄວາມສະເໝີພາບ ໃນການດຳລົງຊີວິດ, ໄດ້ຮັບການສຶກສາ, ສືບທອດມູນມໍລະດົກ ແລະ ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ປະມວນກົດໝາຍແພ່ງ, ເລກທີ 55/ສພຊ, ລົງວັນທີ 6 ທັນວາ 2018

### ມາດຕາ 574 ຜູ້ສືບທອດມູນມໍລະດົກຕາມກົດໝາຍ, ຂໍ້ 1-2

ຜູ້ສືບທອດມູນມໍລະດົກຕາມກົດໝາຍ ມີດັ່ງນີ້:

1. ລູກຄີງ, ລູກລ້ຽງ, ລູກນ້າ ຂອງເຈົ້າມູນມໍລະດົກ ລວມທັງເດັກຢູ່ໃນທ້ອງຂອງຜູ້ເປັນແມ່ກໍມີສິດສືບທອດມູນມໍລະດົກເຊັ່ນດຽວກັນ ແມ່ເປັນຜູ້ຄຸ້ມຄອງພູດຂອງຜູ້ກ່ຽວໄວ້;
2. ຜົວ ຫຼື ເມຍ ຂອງເຈົ້າມູນມໍລະດົກທີ່ຍັງມີຊີວິດຢູ່.

### ມາດຕາ 576 ການແບ່ງປັນມູນມໍລະດົກລະຫວ່າງຜົວ ຫຼື ເມຍທີ່ຍັງມີຊີວິດຢູ່ ແລະ ລູກ

ໃນກໍລະນີທີ່ຜົວ ຫຼື ເມຍຫາກໄດ້ເສຍຊີວິດໄປ ໂດຍໄດ້ປະເມຍ ຫຼື ຜົວ ແລະ ລູກໄວ້ ກໍແມ່ນລູກເປັນຜູ້ມີສິດຮັບມູນມໍລະດົກທີ່ເປັນຊັບເດີມຂອງເຈົ້າມູນມໍລະດົກສາມສ່ວນສີ່ ແລະ ອີກໜຶ່ງສ່ວນສີ່ ແມ່ນເມຍ ຫຼື ຜົວທີ່ຍັງມີຊີວິດຢູ່ ເປັນຜູ້ຮັບ.

ສ່ວນສິນສົມສ້າງນັ້ນ ໃຫ້ແບ່ງເຄິ່ງຄື ເຄິ່ງໜຶ່ງໃຫ້ເມຍ ຫຼື ຜົວທີ່ຍັງມີຊີວິດຢູ່ ແລະ ອີກເຄິ່ງໜຶ່ງນັ້ນໃຫ້ແບ່ງປັນແກ່ພວກລູກ ເປັນພູດສະເໝີກັນ.

ປີ ມະໂລງ ພສ ໒໕໖໗ **ກັນຍາ 9 September** ຄສ 2024

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| 1 ຮ.13 ດ.9 | 2 ຮ.14 ດ.9 | 3 ຂ.1 ດ.10 | 4 ຂ.2 ດ.10 | 5 ຂ.3 ດ.10 | 6 ຂ.4 ດ.10 | 7 ຂ.5 ດ.10 |
| 8 ຂ.6 ດ.10 | 9 ຂ.7 ດ.10 | 10 ຂ.8 ດ.10 | 11 ຂ.9 ດ.10 | 12 ຂ.10 ດ.10 | 13 ຂ.11 ດ.10 | 14 ຂ.12 ດ.10 |
| 15 ຂ.13 ດ.10 | 16 ຂ.14 ດ.10 | 17 ຂ.15 ດ.10 | 18 ຮ.1 ດ.10 | 19 ຮ.2 ດ.10 | 20 ຮ.3 ດ.10 | 21 ຮ.4 ດ.10 |
| 22 ຮ.5 ດ.10 | 23 ຮ.6 ດ.10 | 24 ຮ.7 ດ.10 | 25 ຮ.8 ດ.10 | 26 ຮ.9 ດ.10 | 27 ຮ.10 ດ.10 | 28 ຮ.11 ດ.10 |
| 29 ຮ.12 ດ.10 | 30 ຮ.13 ດ.10 | | | | | |

2 ວັນບຸນຫໍ່ເຂົ້າປະດັບດິນ
17 ວັນບຸນຫໍ່ເຂົ້າສະຫຼາກ

ປີ ມະໂລງ ພສ ໒໕໖໗ **ຕຸລາ 10 October** ຄສ 2024

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | 1 ຮ.14 ດ.10 | 2 ຮ.15 ດ.10 | 3 ຂ.1 ດ.11 | 4 ຂ.2 ດ.11 | 5 ຂ.3 ດ.11 |
| 6 ຂ.4 ດ.11 | 7 ຂ.5 ດ.11 | 8 ຂ.6 ດ.11 | 9 ຂ.7 ດ.11 | 10 ຂ.8 ດ.11 | 11 ຂ.9 ດ.11 | 12 ຂ.10 ດ.11 |
| 13 ຂ.11 ດ.11 | 14 ຂ.12 ດ.11 | 15 ຂ.13 ດ.11 | 16 ຂ.14 ດ.11 | 17 ຂ.15 ດ.11 | 18 ຮ.1 ດ.11 | 19 ຮ.2 ດ.11 |
| 20 ຮ.3 ດ.11 | 21 ຮ.4 ດ.11 | 22 ຮ.5 ດ.11 | 23 ຮ.6 ດ.11 | 24 ຮ.7 ດ.11 | 25 ຮ.8 ດ.11 | 26 ຮ.9 ດ.11 |
| 27 ຮ.10 ດ.11 | 28 ຮ.11 ດ.11 | 29 ຮ.12 ດ.11 | 30 ຮ.13 ດ.11 | 31 ຮ.14 ດ.11 | | |

7 ວັນຄູແຫ່ງຊາດ
12 ວັນປະກາດເອກະລາດ
17 ວັນບຸນອອກພັນສາ
18 ວັນບຸນຊ່ວງເຮືອ ທ່າວັດຈັນ, ນະຄອນຫຼວງວຽງຈັນ

# ວິທີການຂໍຄວາມຊ່ວຍເຫຼືອທາງດ້ານກົດໝາຍ

## ການຈັດຕັ້ງທີ່ໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍມີດັ່ງນີ້:




## ດຳລັດວ່າດ້ວຍການຊ່ວຍເຫຼືອທາງດ້ານກົດໝາຍ, ເລກທີ 77/ລບ, ລົງວັນທີ 28 ກຸມພາ 2018

### ມາດຕາ 12 ຜູ້ໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ

ຜູ້ໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ ມີດັ່ງນີ້:

1. ຜູ້ທຸກຍາກ;
2. ຜູ້ດ້ອຍໂອກາດ;
3. ເດັກທີ່ຕ້ອງການ ການປົກປ້ອງພິເສດ;
4. ຜູ້ກະທຳຜິດ ທີ່ກົດໝາຍກຳນົດໃຫ້ມີທະນາຍຄວາມເຂົ້າໄປຊ່ວຍເຫຼືອ;
5. ຄົນພິການ;
6. ແມ່ຍິງ ແລະ ເດັກນ້ອຍ ທີ່ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ;
7. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

### ມາດຕາ 13 ວິທີການຂໍການຊ່ວຍເຫຼືອທາງດ້ານກົດໝາຍ

ການຂໍການຊ່ວຍເຫຼືອທາງດ້ານກົດໝາຍ ນຳອົງການຈັດຕັ້ງໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ສາມາດດຳເນີນດ້ວຍວິທີການໃດໜຶ່ງ ດັ່ງລຸ່ມນີ້:

1. ຍື່ນຄຳຮ້ອງຂໍດ້ວຍຕົນເອງ, ຜູ້ຕາງໜ້າຄອບຄົວ ຫຼື ຍາດພີ່ນ້ອງ;
2. ການສະເໜີຂອງອົງການປົກຄອງບ້ານ, ໂຮງຮຽນ, ໂຮງໝໍ ແລະ ອົງການຈັດຕັ້ງອື່ນ;
3. ຕິດຕໍ່ພົວພັນທາງໂທລະສັບ ຫຼື ເຄື່ອງມືສື່ສານຕ່າງໆ;
4. ວິທີການອື່ນ.

### ມາດຕາ 15 ການຈັດຕັ້ງໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ

ການຈັດຕັ້ງໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ປະກອບດ້ວຍ:

1. ກົມສົ່ງເສີມລະບົບຍຸຕິທຳ ຂອງກະຊວງຍຸຕິທຳ, ຂະແໜງສົ່ງເສີມວຽກງານຍຸຕິທຳຮາກຖານ ຂອງ ພະແນກຍຸຕິທຳແຂວງ, ນະຄອນຫຼວງ;
2. ໜ່ວຍງານສົ່ງເສີມວຽກງານຍຸຕິທຳຮາກຖານຂອງຫ້ອງການຍຸຕິທຳເມືອງ, ເທດສະບານ, ນະຄອນ;
3. ຫ້ອງການຊ່ວຍເຫຼືອທາງດ້ານກົດໝາຍຂອງສະພາທະນາຍຄວາມ;
4. ການຈັດຕັ້ງທີ່ໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ຂອງສະຫະພັນແມ່ຍິງ ແລະ ຂອງອົງການຈັດຕັ້ງອື່ນ.

ປີ ມະໂລງ ພສ ໒໕໖໗ **ພະຈິກ 11 November** ຄສ 2024

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | | | 1 ຂ.1 ດ.12 | 2 ຂ.2 ດ.12 |
| 3 ຂ.3 ດ.12 | 4 ຂ.4 ດ.12 | 5 ຂ.5 ດ.12 | 6 ຂ.6 ດ.12 | 7 ຂ.7 ດ.12 | 8 ຂ.8 ດ.12 | 9 ຂ.9 ດ.12 |
| 10 ຂ.10 ດ.12 | 11 ຂ.11 ດ.12 | 12 ຂ.12 ດ.12 | 13 ຂ.13 ດ.12 | 14 ຂ.14 ດ.12 | 15 ຂ.15 ດ.12 | 16 ຮ.1 ດ.12 |
| 17 ຮ.2 ດ.12 | 18 ຮ.3 ດ.12 | 19 ຮ.4 ດ.12 | 20 ຮ.5 ດ.12 | 21 ຮ.6 ດ.12 | 22 ຮ.7 ດ.12 | 23 ຮ.8 ດ.12 |
| 24 ຮ.9 ດ.12 | 25 ຮ.10 ດ.12 | 26 ຮ.11 ດ.12 | 27 ຮ.12 ດ.12 | 28 ຮ.13 ດ.12 | 29 ຮ.14 ດ.12 | 30 ຮ.15 ດ.12 |

15 ວັນບຸນນະມັດສະການພຣະທາດຫຼວງວຽງຈັນ

ປີ ມະໂລງ ພສ ໒໕໖໗ **ທັນວາ 12 December** ຄສ 2024

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| 1 ຂ.1 ດ.1 | 2 ຂ.2 ດ.1 | 3 ຂ.3 ດ.1 | 4 ຂ.4 ດ.1 | 5 ຂ.5 ດ.1 | 6 ຂ.6 ດ.1 | 7 ຂ.7 ດ.1 |
| 8 ຂ.8 ດ.1 | 9 ຂ.9 ດ.1 | 10 ຂ.10 ດ.1 | 11 ຂ.11 ດ.1 | 12 ຂ.12 ດ.1 | 13 ຂ.13 ດ.1 | 14 ຂ.14 ດ.1 |
| 15 ຂ.15 ດ.1 | 16 ຮ.1 ດ.1 | 17 ຮ.2 ດ.1 | 18 ຮ.3 ດ.1 | 19 ຮ.4 ດ.1 | 20 ຮ.5 ດ.1 | 21 ຮ.6 ດ.1 |
| 22 ຮ.7 ດ.1 | 23 ຮ.8 ດ.1 | 24 ຮ.9 ດ.1 | 25 ຮ.10 ດ.1 | 26 ຮ.11 ດ.1 | 27 ຮ.12 ດ.1 | 28 ຮ.13 ດ.1 |
| 29 ຮ.14 ດ.1 | 30 ຂ.1 ດ.2 | 31 ຂ.2 ດ.2 | | | | |

2 ວັນສະຖາປະນາ ສປປ ລາວ

13 ວັນຄ້າຍວັນເກີດ ທ່ານ ປະທານ ໄກສອນ ພົມວິຫານ

## ຜະລິດໂດຍ:

## ສະໜັບສະໜູນໂດຍ: ພາກລັດ

## ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສັງຄົມ ແລະ ຄູ່ຮ່ວມພັດທະນາ:

## ເບີໂທ ສາຍດ່ວນ

| | |
|---|---|
| **156** | ສະພາແຫ່ງຊາດ |
| **1516** | ລັດຖະບານ |
| **1514** | ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| **021 841 120** | ກະຊວງ ຍຸຕິທຳ |
| **1362** | ສູນໃຫ້ຄຳປຶກສາ ຂອງສູນກາງສະຫະພັນແມ່ຍິງລາວ |
| **021 990 445** | ສະພາທະນາຍຄວາມ |
| **030 566 8539** | ສູນບໍລິການກົດໝາຍເພື່ອປະຊາຊົນ ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ |
| **1300** | ຕ້ານການຄ້າມະນຸດ (ກົມຕຳຫຼວດ ແລະ ຕ້ານການຄ້າມະນຸດ) |
| **1511** | ລາຍງານໄພພິບັດ, ແຮງງານ ແລະ ສັງເຄາະ |

